JDB
ທະນາຄານຮ່ວມພັດທະນາ

| Position ID: | EXC_CM/Credit |
|---|---|

# ລາຍລະອຽດຂອງໜ້າວຽກ ແລະ ເງື່ອນໄຂການສະໝັກ

**ຊື່ຕໍາແໜ່ງ:** ພະນັກງານ ບໍລິຫານສິນເຊື່ອ

**Position Name:** ***Credit Management Officer***

❖ ໜ້າທີ່ຮັບຜິດຊອບຫຼັກ (ToR):

- ຕິດຕາມ-ກວດຄືນເອກະສານ ຂາອອກ-ຂາເຂົ້າ ຂອງພະແນກສິນເຊື່ອໃຫ້ມີຄວາມຖືກຕ້ອງ;
- ພົວພັນປະສານງານກັບພາກສ່ວນພາຍນອກ ເພື່ອສະໜອງຂໍ້ມູນ ແລະ ຂໍຂໍ້ມູນ : BOL, CIB;
- ເກັບກໍາລາຍຮັບ-ລາຍຈ່າຍພາຍໃນພະແນກສິນເຊື່ອ;
- ສະຫຼູບລາຍງານພາຍໃນ ກ່ຽວກັບວຽກງານສິນເຊື່ອ ປະຈໍາວັນ, ເດືອນ, ໄຕມາດ ແລະ ປະຈໍາປີ;
- ປະຕິບັດລະບຽບການຕ່າງໆ ທີ່ທະນາຄານຮ່ວມພັດທະນາ ແລະ ທະນາຄານແຫ່ງ ສປປ ລາວ ວາງອອກ ທີ່ພົວພັນກັບວຽກງານຂອງຕົນຢ່າງເຂັ້ມງວດ;
- ປະຕິບັດວຽກງານຊໍາລະສະສາງສິນເຊື່ອ ແລະ ວຽກງານລະບົບສິນເຊື່ອ;
- ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍຂອງຫົວໜ້າສາຍງານ.

❖ ວຸດທິການສຶກສາ (Academic Background):

- ຜູ້ທີ່ສະໝັກໃນຕໍາແໜ່ງນີ້ຈະຕ້ອງຮຽນຈົບລະດັບ ປະລິນຍາຕີ ຂຶ້ນໄປໃນສາຂາວິຊາ:
  - ການເງິນ-ການທະນາຄານ;
  - ການຕະຫຼາດ;
  - ບັນຊີ;
  - ເສດຖະສາດ, ບໍລິຫານທຸລະກິດ ຫຼື ສາຂາທີ່ກ່ຽວຂ້ອງ.

❖ ກ່ຽວກັບຜູ້ສະໝັກ (About Applicant):

- ນັກສຶກສາຈົບໃໝ່ ຫຼື ມີປະສົບການໃນການເຮັດວຽກມາກ່ອນ;
- ສາມາດສື່ສານ, ຂຽນ, ອ່ານໄດ້ ລະດັບດີ: (ພາສາອັງກິດ ຫຼື ພາສາຈີນ ຫຼື ພາສາຕ່າງປະເທດໃດໜຶ່ງ);
- ເປັນຄົນທີ່ມີບຸກຄະລິກດີ ແລະ ຮັກໃນການເຮັດວຽກດ້ານການບໍລິການ;
- ມີຄວາມຮູ້ ຄວາມສາມາດໃນການໃຊ້ຄອມພິວເຕີ, ການນໍາໃຊ້ MS Office ແລະ Excel ໃນລະດັບດີ;
- ເປັນຄົນທີ່ບໍ່ເຄີຍກໍ່ຄະດີອາຍາ ແລະ ບໍ່ເຄີຍຖືກຕັດອິດສະພາບມາກ່ອນ;
- ສາມາດເຮັດວຽກໄດ້ຫຼາກຫຼາຍ, ມີຄວາມອົດທົນ, ໃສ່ໃຈໃນລາຍລະອຽດ ແລະ ສາມາດເຮັດວຽກເປັນທີມ;
- ເປັນຄົນທີ່ສາມາດເຮັດວຽກກັບເພື່ອນຮ່ວມງານຫຼາຍຄົນໄດ້, ມີຄວາມອົດທົນສູງ, ມີຄວາມລະອຽດໃນໜ້າວຽກທີ່ໄດ້ຮັບມອບໝາຍ, ມີຄວາມຊື່ສັດ ແລະ ຍຶດໝັ້ນໃນໜ້າທີ່.